**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສາທາລະນະສຸກ
ກົມອາຫານ ແລະ ຢາ
ໂທ : 021 214 013-4
ແຟັກ: 021 214 015

1190
ເລກທີ________/ກອຢ.
ນະຄອນຫລວງວຽງຈັນ, ວັນທີ.................
17 FEB 2017

## ບົດແນະນຳກ່ຽວກັບການຈັດຕັ້ງປະຕິບັດ ຂໍ້ຕົກລົງວ່າດ້ວຍຮ້ານຂາຍຍ່ອຍຢາ ສະບັບເລກທີ 2922/ສທ. ລົງວັນທີ 21 ກັນຍາ 2016 ສະບັບປັບປຸງ

- ອີງຕາມ ກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ ສະບັບເລກທີ 07/ສພຊ, ລົງວັນທີ 21/12/2011
- ອີງຕາມ ຂໍ້ຕົກລົງຂອງກະຊວງສາທາລະນະສຸກ ວ່າດ້ວຍຮ້ານຂາຍຍ່ອຍຢາ ສະບັບເລກທີ 2922/ສທ, ລົງວັນທີ 21/09/2016.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງສາທາລະນະສຸກ ວ່າດ້ວຍພາລະບົດບາດ ແລະ ການເຄື່ອນໄຫວຂອງກົມອາຫານ ແລະ ຢາ ສະບັບເລກທີ 1598/ສທ. ລົງວັນທີ 14 ມິຖຸນາ 2016.

ເພື່ອຜັນຂະຫຍາຍໃນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງກະຊວງສາທາລະນະສຸກ ວ່າດ້ວຍຮ້ານຂາຍຍ່ອຍຢາ ສະບັບເລກທີ 2922/ສທ, ລົງວັນທີ 21/09/2016 ໃຫ້ມີປະສິດທິຜົນ ແລະ ມີຄວາມເປັນເອກະພາບໃນທົ່ວປະເທດ. ກົມອາຫານ ແລະ ຢາ ຈິ່ງອອກຄຳສັ່ງແນະນຳ ດັ່ງນີ້:

**1. ການເຜີຍແຜ່ຂໍ້ຕົກລົງ**

ມອບໃຫ້ພະແນກສາທາລະນະສຸກແຂວງ, ນະຄອນ ນຳເອົາຂໍ້ຕົກລົງຂອງກະຊວງສາທາລະນະສຸກ ວ່າດ້ວຍຮ້ານຂາຍຍ່ອຍຢາ ສະບັບເລກທີ2922/ສທ, ລົງວັນທີ 21/09/2016 ໄປເຜີຍແຜ່ໃຫ້ທົ່ວເຖິງພາຍໃນຂອບເຂດຄວາມຮັບຜິດຊອບຂອງແຂວງ, ນະຄອນ.

**2. ການຄຸ້ມຄອງ**

ໃຫ້ພະແນກສາທາລະນະສຸກແຂວງ, ນະຄອນ, ຂະແໜງອາຫານ ແລະ ຢາ ແຂວງ, ນະຄອນ ໃນທົ່ວປະເທດ ເປັນເຈົ້າການດ້ານການຄຸ້ມຄອງຮ້ານຂາຍຍ່ອຍຢາ ທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນ.

**3. ການສະເໜີຂໍອະນຸຍາດທະບຽນວິຊາຊີບເພສັຊສະກຳ ເປີດຮ້ານຂາຍຍ່ອຍຢາໃໝ່ ແລະ ຂໍຍົກຍ້າຍຮ້ານຂາຍຍ່ອຍຢາ.**

ເພື່ອໃຫ້ມີຄວາມເປັນເອກະພາບໃນການຄົ້ນຄວ້າພິຈາລະນາການອອກອະນຸຍາດທະບຽນວິຊາຊີບເພສັຊສະກຳ ເປີດຮ້ານຂາຍຍ່ອຍຢາໃໝ່ ແລະ ຂໍຍົກຍ້າຍຮ້ານຂາຍຍ່ອຍຢາ ໃຫ້ປະຕິບັດດັ່ງນີ້:

3. 1. ສຳລັບການສະເໜີ ຂໍທະບຽນວິຊາຊີບເພສັຊສະກຳ ເປີດຮ້ານຂາຍຍ່ອຍຢາໃໝ່ ຂັ້ນ 1, ຂັ້ນ 2 ແລະ ຂັ້ນ 3 ໃຫ້ໜ່ວຍງານອາຫານ ແລະ ຢາເມືອງ, ຂະແໜງອາຫານ ແລະ ຢາແຂວງ ແລະ ນະຄອນເປັນຈຸດປະສານງານ.

3. 2. ການສະເໜີແຕ່ລະຄັ້ງໃຫ້ປະຕິບັດຕາມຂັ້ນຕອນ, ປະກອບເອກະສານໃຫ້ຄົບຖ້ວນສະເໜີຕາມລະບຽບການ, ດຳເນີນການກວດກາຕາມມາດຕະຖານ, ບັນທຶກຜົນຂອງການກວດກາ, ປະກອບຄຳຄິດເຫັນ ແລ້ວສະເໜີຜ່ານພະແນກ

ສາທາລະນະສຸກແຂວງ, ນະຄອນ ສັງລວມຕາມແບບຟອມ ແລ້ວ ສົ່ງມາຍັງກົມອາຫານ ແລະ ຢາ ເພື່ອສະເໜີຕໍ່ທ່ານລັດຖະມົນຕີກະຊວງສາທາລະນະສຸກເປັນຜູ້ອະນຸມັດ.

3. 3 ສຳລັບເພສັດຊະກອນທີ່ສັງກັດລັດ ຫຼື ບໍ່ສັງກັດລັດ ມີສິດເປີດຮ້ານຂາຍຢາ ນອກ ຫຼື ໃນໂມງລັດຖະການໄດ້, ແຕ່ຕ້ອງໄດ້ຜ່ານການຮັບໃຊ້ວຽກງານເພສັດຊະກຳມາແລ້ວຢ່າງໜ້ອຍ 2 ປີ ສຳລັບເຂດຫ່າງໄກສອກຫຼີກ, 3 ປີຂຶ້ນໄປ ສຳລັບເຂດເທດສະບານ ໂດຍມີການຢັ້ງຢືນຈາກການຈັດຕັ້ງຂອງພາກລັດ ຫຼື ເອກະຊົນທີ່ຕົນໄດ້ປະກອບສ່ວນດ້ານເພສັດຊະກຳດັ່ງກ່າວຢ່າງຖືກຕ້ອງ ແລະ ຮັບຮູ້ຢ່າງເປັນທາງການ. ສຳລັບການຢັ້ງຢືນຈາກການຮັບໃຊ້ວິຊາສະເພາະໃນພາກເອກະຊົນ ແມ່ນໃຫ້ຮັບຮອງຈາກເຈົ້າໜ້າທີ່ອາຫານ ແລະ ຢາ ຂັ້ນແຂວງ, ນະຄອນ ຕື່ມອີກ.

3. 4. ສຳລັບການສະເໜີຍົກຍ້າຍຮ້ານຂາຍຍ່ອຍຢາ ຂັ້ນ 1, ຂັ້ນ 2 ແລະ ຂັ້ນ 3 ໃຫ້ໜ່ວຍງານອາຫານ ແລະ ຢາເມືອງ, ຂະແໜງອາຫານ ແລະ ຢາແຂວງ ແລະ ນະຄອນເປັນຈຸດປະສານງານ ແລະ ດຳເນີນການປະຕິບັດຕາມຂັ້ນຕອນ, ປະກອບເອກະສານໃຫ້ຄົບຖ້ວນສະເໜີຕາມລະບຽບການ, ດຳເນີນການກວດກາຕາມມາດຕະຖານ, ບັນທຶກຜົນຂອງການກວດກາ, ປະກອບຄຳເຫັນ ແລ້ວສະເໜີຜ່ານພະແນກສາທາລະນະສຸກແຂວງ, ນະຄອນ ສົ່ງມາຍັງກົມອາຫານ ແລະ ຢາ ເປັນຜູ້ພິຈາລະນາອະນຸມັດ.

## 4. ການນຳໃຊ້ແບບຟອມ ແລະ ການຈັດສົ່ງເອກະສານ

ເພື່ອຄວາມເປັນເອກະພາບໃນທົ່ວປະເທດ ໃຫ້ແຕ່ລະຂັ້ນນຳໃຊ້ແບບຟອມທີ່ກຳນົດໂດຍກົມອາຫານ ແລະ ຢາ ເຊິ່ງການປະກອບຄຳຮ້ອງ ແລະ ການຈັດສົ່ງເອກະສານໃຫ້ປະຕິບັດຄື:

4. 1. ເອກະສານສະເໜີຂໍທະບຽນວິຊາຊີບເພສັຊສະກຳຮ້ານຂາຍຍ່ອຍຢາ ຫຼື ສະເໜີຂໍຕໍ່ທະບຽນວິຊາຊີບເພສັຊສະກຳຮ້ານຂາຍຍ່ອຍຢາ ຫຼື ສະເໜີຍົກຍ້າຍຮ້ານຂາຍຍ່ອຍຢາ ຂັ້ນ 1, ຂັ້ນ 2 ແລະ ຂັ້ນ 3 ໃຫ້ຈັດສົ່ງລວມກັນພາຍໃນແຂວງ, ນະຄອນ ຫຼືຕາມຈຳນວນທີ່ເໝາະສົມ ຕາມກຳນົດໄລຍະເວລາຂອງ ການອະນຸຍາດເປີດໃໝ່ ຫຼື ການອະນຸຍາດຕໍ່ທະບຽນ.

4. 2. ການຈັດສົ່ງໃບສະເໜີແຕ່ລະຄັ້ງໃຫ້ມີການສະຫຼຸບສັງລວມ, ຕີລາຄາກ່ຽວກັບການຄຸ້ມຄອງຮ້ານຂາຍຍ່ອຍຢາ ຕາມ 10 ຕົວຊີ້ວັດຂອງການຕິດຕາມການເຄື່ອນໄຫວຮ້ານຂາຍຍ່ອຍຢາແຕ່ລະຮ້ານ

4. 3. ສຳລັບການຕໍ່ທະບຽນວິຊາຊີບເພສັຊສະກຳ ຮ້ານຂາຍຍ່ອຍຢາ ເພື່ອເປັນບ່ອນອີງໂດຍພື້ນຖານແກ່ການພິຈາລະນາຂອງກົມອາຫານ ແລະ ຢາ ກໍຄືການອະນຸມັດຂອງການນຳກະຊວງສາທາລະນະສຸກ. ເອກະສານທີ່ສະເໜີແຕ່ລະຄັ້ງໃຫ້ອັດສຳເນົາໄວ້ຢູ່ຂັ້ນແຂວງ, ນະຄອນ ເພື່ອຕິດຕາມການພິຈາລະນາ ແລະ ເກັບສຳເນົາ.

## 5. ການຕໍ່ອະນຸຍາດທະບຽນວິຊາຊີບເພສັຊສະກຳ

ເພື່ອໃຫ້ມີຄວາມເປັນເອກະພາບໃນການຄົ້ນຄວ້າພິຈາລະນາການຕໍ່ອະນຸຍາດທະບຽນວິຊາຊີບເພສັດຊະກຳຂັ້ນ 1, ຂັ້ນ 2 ແລະ ຂັ້ນ 3 ໃຫ້ປະຕິບັດດັ່ງນີ້:

5. 1. ໃຫ້ໜ່ວຍງານອາຫານ ແລະ ຢາເມືອງ, ຂະແໜງອາຫານ ແລະ ຢາແຂວງ ແລະ ນະຄອນເປັນຈຸດປະສານງານ ແລະ ດຳເນີນການປະຕິບັດຕາມຂັ້ນຕອນ, ປະກອບເອກະສານໃຫ້ຄົບຖ້ວນສະເໜີຕາມລະບຽບການ, ດຳເນີນການກວດກາຕາມມາດຕະຖານ, ບັນທຶກຜົນຂອງການກວດກາ ແລ້ວສະເໜີຜ່ານພະແນກສາທາລະນະສຸກແຂວງ, ນະຄອນ ສົ່ງມາຍັງກົມອາຫານ ແລະ ຢາ ເພື່ອພິຈາລະນາ

5. 2. ສຳລັບໃບທະບຽນວິຊາຊີບເພສັດຊະກຳ ຫຼື ໃບອະນຸຍາດຜູ່ຊ່ວຍຂາຍຍ່ອຍຢາ ທີ່ໄດ້ອອກໃຫ້ແລ້ວນັ້ນ ໃຫ້ສົ່ງແຕ່ສະບັບອັດສຳເນົາ,

5. 3. ພາຍຫຼັງກົມອາຫານ ແລະ ຢາພິຈາລະນາແລ້ວ ຕ້ອງແຈ້ງຢ່າງເປັນທາງການໃຫ້ພະແນກສາທາລະນະສຸກແຂວງ, ນະຄອນ ເປັນຜູ້ລົງລາຍເຊັນການຕໍ່ທະບຽນວິຊາຊີບເພສັຊສະກຳດັ່ງກ່າວ ໂດຍແມ່ນຂະແໜງອາຫານ ແລະ ຢາແຂວງ, ນະຄອນທີ່ກ່ຽວຂ້ອງເປັນຜູ້ກະກຽມ.

**6. ການເກັບສຳເນົາທະບຽນວິຊາຊີບເພສັຊສະກຳ ແລະ ເອກະສານກ່ຽວຂ້ອງ**

ໃບທະບຽນວິຊາຊີບເພສັຊສະກຳທີ່ໄດ້ຜ່ານການອະນຸມັດເປີດໃໝ່ ມີ 3 ສະບັບຕົ້ນ ແຕ່ລະສະບັບໃຫ້ເກັບຮັກສາດັ່ງນີ້:

6. 1. ໃບທະບຽນວິຊາຊີບເພສັຊສະກຳທີ່ໄດ້ຜ່ານການອະນຸມັດເປີດໃໝ່ ສະບັບຕົ້ນ 01 ສະບັບສຳເນົາໄວ້ຢູ່ທີ່ກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ, 01 ສະບັບແມ່ນເກັບສຳເນົາທີ່ຂະແໜງອາຫານ ແລະ ຢາແຂວງ, ນະຄອນ ແລະ ອີກ 01 ສະບັບແມ່ນເກັບຮັກສາໄວ້ນຳຜູ້ປະກອບການຮ້ານຂາຍຢາ ເພື່ອຕິດຕາມ ແລະ ແຈ້ງຕໍ່ເຈົ້າໜ້າທີ່ໃນເວລາຕິດຕາມກວດກາ.

6. 2. ບໍ່ໃຫ້ນຳເອົາໃບທະບຽນວິຊາຊີບເພສັຊສະກຳໄປອັດແຂງ, ໃຫ້ຮັກສາໄວ້ປະຈຳຮ້ານຂາຍຍ່ອຍຢາເປັນຢ່າງດີ, ບໍ່ໃຫ້ເປື່ອນເປິ ແລະ ບໍ່ໃຫ້ຕົກເຮ່ຍເສັຍຫາຍ.

**7. ສະຖານທີ່ ແລະ ປ້າຍຮ້ານຂາຍຍ່ອຍຢາ**

ເພື່ອໃຫ້ມີຄວາມສະອາດ, ຈົບງາມ ແລະ ເປັນມາດຕະຖານດ້ານສະຖານທີ່ ແລະປ້າຍຮ້ານຂາຍຢາໃຫ້ປະຕິບັດຄື:

7. 1. ໃຫ້ຂະແໜງອາຫານ ແລະ ຢາ ແຂວງ, ນະຄອນ, ພະແນກສາທາລະນະສຸກແຂວງ, ນະຄອນ ຊຸກຍູ້ຜູ້ປະກອບການຮ້ານຂາຍຍ່ອຍຢາໃນຂົງເຂດຮັບຜິດຊອບຂອງຕົນໃຫ້ປັບປຸງຮ້ານຂາຍຍ່ອຍຢາທີ່ອະນຸຍາດຜ່ານມາເອົາໃຈໃສ່ບູລະນະສະຖານທີ່ຮ້ານຂາຍຍ່ອຍຢາໃຫ້ໄດ້ມາດຕະຖານ ແລະ ສອດຄ່ອງຕາມລະບຽບການ ຫຼື ເງື່ອນໄຂຮ້ານຂາຍຍ່ອຍຢາ ເພື່ອຮັບປະກັນດ້ານຄຸນນະພາບຂອງຢາ.

7. 2. ເອົາໃຈໃສ່ຊຸກຍູ້ການປັບປຸງປ້າຍຂອງຮ້ານຂາຍຍ່ອຍຢາ ແຕ່ລະຂັ້ນ ທີ່ອະນຸຍາດຜ່ານມາ ຕາມທີ່ກຳນົດໃນຂໍ້ຕົກລົງວ່າດ້ວຍຮ້ານຂາຍຍ່ອຍຢາສະບັບເລກທີ 2922/ສທ, ລົງວັນທີ 21/09/2016.

**8. ການຕິດຕາມ ຊຸກຍູ້ ແລະ ກວດກາ**

ເພື່ອຮັບປະກັນໃຫ້ການດຳເນີນທຸລະກິດຮ້ານຂາຍຍ່ອຍຢາ ຈັດຕັ້ງປະຕິບັດສອດຄ່ອງຕາມລະບຽບການ ໃຫ້ການຈັດຕັ້ງກ່ຽວຂ້ອງແຕ່ລະຂັ້ນປະຕິບັດດັ່ງນີ້:

8. 1. ໃຫ້ພະແນກສາທາລະນະສຸກແຂວງ, ນະຄອນ ສືບຕໍ່ຊີ້ນຳ ຂະແໜງອາຫານ ແລະ ຢາແຂວງ, ນະຄອນເອົາໃຈໃສ່ໃນການຕິດຕາມ, ກວດກາ ໃຫ້ໄດ້ຢ່າງໜ້ອຍ 02 ຄັ້ງຕໍ່ປີ

8. 2. ເປັນເຈົ້າການໃນການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ປະຕິບັດມາດຕະການຕໍ່ຜູ້ລະເມີດ.

8. 3.ໃຫ້ເປັນເຈົ້າການໃນການຂຶ້ນແຜນງົບປະມານ, ຍົກລະດັບຄວາມຮູ້ຄວາມສາມາດຂອງພະນັກງານຄຸ້ມຄອງຂັ້ນເມືອງ, ແຂວງ ແລະ ນະຄອນ ລວມທັງຜູ້ປະກອບການຮ້ານຂາຍຍ່ອຍຢາ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ.

8. 4. ຮ້ານຂາຍຍ່ອຍຢາ ໂດຍສະເພາະຂັ້ນ 1 ແລະ ຂັ້ນ 2 ຈຳນວນໜຶ່ງທີ່ວິຊາການບໍ່ໄດ້ມີໜ້າປະຈຳ ແຕ່ມີຜູ້ຊ່ວຍຂາຍຢາທີ່ໄດ້ຮັບອະນຸຍາດ, ເພື່ອເຮັດໃຫ້ການເຄື່ອນໄຫວຂອງຮ້ານຂາຍຍ່ອຍຢາດັ່ງກ່າວໄດ້ຮັບການເອົາໃຈໃສ່ທາງວິຊາການຢ່າງຕໍ່ເນື່ອງ ໃນທຸກໆ ເດືອນແມ່ນໃຫ້ວິຊາການຜູ້ທີ່ຖືທະບຽນວິຊາຊີບ ເພສັຊສະກຳ ດຳເນີນການຕິດຕາມກວດກາດ້ວຍຕົນເອງພາຍໃນຮ້ານຂາຍຍ່ອຍຢາ ໂດຍນຳໃຊ້ແບບຟອມທີ່ກົມອາຫານ ແລະ ຢາກຳນົດ ແລ້ວສຳເນົາໄວ້ເປັນບ່ອນອີງໃຫ້ແກ່ເຈົ້າໜ້າທີ່ກວດກາອາຫານ ແລະ ຢາ ຂັ້ນເມືອງ, ແຂວງ, ນະຄອນ ຫຼື ສູນກາງ ເວລາລົງກວດກາຕິດຕາມ.

**9. ການປະສານງານ, ການລາຍງານ ແລະ ການເກັບກຳດ້ານສະຖິຕິຮ້ານຂາຍຍ່ອຍຢາ.**

9. 1. ໃຫ້ພະແນກສາທາລະນະສຸກແຂວງ, ນະຄອນ ສືບຕໍ່ຊີ້ນຳ ຂະແໜງອາຫານ ແລະ ຢາແຂວງ, ນະຄອນ. ໃຫ້ເອົາໃຈໃສ່ໃນການປະສານງານລະຫວ່າງສູນກາງ ແລະ ທ້ອງຖິ່ນໃນຂົງເຂດສາທາລະນະສຸກ ແລະ ຂົງເຂດອື່ນທີ່ກ່ຽວຂ້ອງ. ໃຫ້ມີການສົມທົບໃນການຕິດຕາມຊຸກຍູ້, ຝຶກອົບຮົມທາງວິຊາການໃຫ້ແກ່ເຈົ້າໜ້າທີ່ຄຸ້ມຄອງດ້ານຢາ ແລະ ຜູ້ປະກອບການຢ່າງເປັນປົກະຕິ.

9. 2. ໃຫ້ພະແນກສາທາລະນະສຸກແຂວງ, ນະຄອນ ສືບຕໍ່ຊີ້ນຳ ຂະແໜງອາຫານ ແລະ ຢາແຂວງ, ນະຄອນເອົາໃຈໃສ່ການຄຸ້ມຄອງ ແລະ ລາຍງານສະພາບການຂອງການເຄື່ອນໄຫວຜູ້ປະກອບການຮ້ານຂາຍຍ່ອຍຢາ ແລະ ວຽກງານອື່ນໆ

ທີ່ກ່ຽວຂ້ອງ ລາຍງານໃຫ້ກົມອາຫານ ແລະ ຢາ ຢ່າງເປັນປົກກະຕິ 2 ຄັ້ງຕໍ່ປີ (ເດືອນ ມິຖຸນາ ແລະ ເດືອນ ທັນວາ ຂອງແຕ່ລະປີ).

9. 3. ໃຫ້ພະແນກສາທາລະນະສຸກແຂວງ, ນະຄອນ ສືບຕໍ່ຊີ້ນໍາ ຂະແໜງອາຫານ ແລະ ຢາແຂວງ, ນະຄອນເອົາໃຈໃສ່ການກໍານົດ ແລະ ອອກແບບຖານຂໍ້ມູນເພື່ອນໍາໃຊ້ໃນການຕິດຕາມ ແລະ ເກັບກໍາສະຖິຕິຮ້ານຂາຍຍ່ອຍຢາ ພາຍໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

ດັ່ງນັ້ນ, ຈຶ່ງໄດ້ອອກຄໍາສັ່ງແນະນໍາສະບັບນີ້ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ຫົວໜ້າ ກົມອາຫານ ແລະ ຢາ

ກະຊວງສາທາລະນະສຸກ
ກົມອາຫານແລະຢາ

ດຣ.ສົມທະວີ ຈາງວິສົມມິດ